ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມອາຊີວະສຶກສາ
ວິທະຍາໄລເຕັກນິກສັບພະວິຊາ

ເລກທີ 665 /ວຕສ

ນະຄອນຫລວງວຽງຈັນ, ວັນທີ 01 ເມສາ 2026

## ໜັງສືແຈ້ງເຊີນປະມູນ ການສ້ອມແປງໄຟຟ້າ ແລະ ປັບປຸງລະບົບຕາຂ່າຍ

1. ວິທະຍາໄລ ເຕັກນິກສັບພະວິຊາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບສະໜອງການສ້ອມແປງໄຟຟ້າ ແລະ ປັບປຸງລະບົບຕາຂ່າຍ ເພື່ອສະໜອງໃຫ້ແກ່ວິທະຍາໄລເຕັກນິກສັບພະວິຊາ ໄລຍະເວລາການຈັດສົ່ງພາຍໃນ 30 ວັນ ພາຍຫຼັງທີ່ເຊັນສັນຍາ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສາມາດເຂົ້າຮ່ວມແຂ່ງຂັນປະມູນໄດ້;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ວິທະຍາໄລເຕັກນິກສັບພະວິຊາ ໂທລະສັບ/ແຟັກ: 021 312 420 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ ໂດຍຜູ້ທີ່ສົນໃຈປະມູນ ຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ວິທະຍາໄລເຕັກນິກສັບພະວິຊາ, ຖະໜົນມິດຕະພາບລາວ-ໄທ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 312 420, ເລີ່ມແຕ່ວັນທີ 01 ເມສາ 2026 ຕາມວັນເວລາລັດຖະການ, ໃນລາຄາ 1,000,000 ກີບ ( ໜຶ່ງລ້ານກີບ ); ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ ເບີ 37 ວິທະຍາໄລເຕັກນິກສັບພະວິຊາ ກ່ອນເວລາ 09:00 ໂມງ ຂອງວັນທີ 06 ພຶດສະພາ 2026 ຈະບໍ່ອະນຸຍາດສົ່ງຊອງປະມູນມາທາງເອເລັກໂຕຼນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 06 ພຶດສະພາ 2026 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ຜູ້ອໍານວຍການ

ກະຊວງສຶກສາທິການ ແລະ ກິລາ ວິທະຍາໄລ ເຕັກນິກ ສັບພະວິຊາ ກົມອາຊີວະສຶກສາ

ສຸລິວັນ ຄໍາພາວົງ

ສແກນດ້ວຍ CamScanner